ບົດບັນທຶກຄວາມເຂົ້າໃຈ

ລະຫວ່າງ

**ກົມພາສີ, ກະຊວງການເງິນ ສຳນັກງານຕັ້ງຢູ່ ບ້ານ ທັດສະດີ ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ ໂທລະສັບ 856 21 223524 ຕໍ່ໄປນີ້ ເອີ້ນຊື່ຫຍໍ້ວ່າ "ຝ່າຍ ກ"**

**ແລະ**

**ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ຂອງ ສປປ ລາວ ສຳນັກງານ ຕັ້ງຢູ່ ບ້ານ ນາຄວາຍໄຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ໂທລະສັບ 856 20 22234394 ຕໍ່ໄປນີ້ ເອີ້ນຊື່ຫຍໍ້ວ່າ ຝ່າຍ ຂ**

ເພື່ອເປັນການຈັດຕັ້ງປະຕິບັດກົດໝາຍ, ລະບຽບການທາງພາສີ ໃຫ້ມີຄວາມເຂັ້ມງວດ, ໂປ່ງໃສ ແລະ ສາມາດກວດສອບໄດ້, ແນໃສ່ການຄຸ້ມຄອງຍານພາຫະນະຂົນສົ່ງສິນຄ້າ ເຂົ້າ-ອອກປະເທດ ແລະ ການແຈ້ງພາສີລ່ວງໜ້າໂດຍສັງເຂບກ່ອນສິນຄ້າມາເຖິງດ່ານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ທັງສອງຝ່າຍເຫັນດີເປັນເອກະພາບ ຕໍ່ເນື້ອໃນບົດບັນທຶກຄວາມເຂົ້າໃຈ ຊຶ່ງມີລາຍລະອຽດ ດັ່ງນີ້:

**1. ຈຸດປະສົງ**

ບົດບັນທຶກຄວາມເຂົ້າໃຈສະບັບນີ້ສ້າງຂຶ້ນ ເພື່ອກຳນົດຫຼັກການ ແລະ ກົນໄກ ການຮ່ວມມື ໃນການແລກປ່ຽນຂໍ້ມູນຂ່າວສານ, ຂໍ້ມູນແຫຼ່ງຂ່າວ ກ່ຽວກັບການຄຸ້ມຄອງພາຫະນະຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ການແຈ້ງພາສີລ່ວງໜ້າກ່ອນສິນຄ້າມາເຖິງດ່ານ ໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍພາສີ ແລະ ລະບຽບການ.

**2. ຂອບເຂດການຮ່ວມມື**

ທັງສອງຝ່າຍເຫັນດີ ເພີ່ມທະວີການຮ່ວມມືໃນຂອບເຂດວຽກງານ ຄື:

**2.1** ການຄວບຄຸມກວດກາພາຫະນະຂົນສົ່ງສິນຄ້າລະຫວ່າງປະເທດ ທີ່ເຂົ້າ-ອອກຜ່ານດ່ານຊາຍແດນ;

**2.2** ການຄຸ້ມຄອງການແຈ້ງພາສີສັງເຂບລ່ວງໜ້າກ່ອນສິນຄ້າມາເຖິງດ່ານຊາຍແດນ;

**2.3** ການແລກປ່ຽນຂໍ້ມູນກ່ຽວກັບພາຫະນະຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ຂໍ້ມູນອື່ນໆ;

3. **ຫຼັກການ**

ທັງສອງຝ່າຍ ເຫັນດີຮ່ວມກັນ ໃນການເພີ່ມທະວີການຮ່ວມມື ຕາມຫຼັກການ ດັ່ງນີ້:

3.1 ຮັບປະກັນ ການຈັດຕັ້ງປະຕິບັດການຮ່ວມມື ບົນພື້ນຖານການປະຕິບັດໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

3.2 ຮັບປະກັນ ລັກສະນະສ້າງສັນ, ກົງໄປກົງມາ ໃນການແລກປ່ຽນຄຳຄິດຄຳເຫັນ ລະຫວ່າງສອງຝ່າຍ ເພື່ອແນໃສ່ປັບປຸງ ການເຄື່ອນໄຫວວຽກງານຂອງແຕ່ລະຝ່າຍໃຫ້ດີຂຶ້ນ;

3.3 ຮັບປະກັນ ໃຫ້ຂໍ້ມູນ ແລະ ເອກະສານທີ່ຕ້ອງການແລກປ່ຽນລະຫວ່າງສອງຝ່າຍ ລ້ວນແຕ່ເປັນຄວາມຈິງ, ຖືກຕ້ອງ ແລະ ຊັດເຈນ;

4. **ການຮັກສາຄວາມລັບ**

ທັງສອງຝ່າຍ ເຫັນດີເຄົາລົບສິດ ແລະ ປົກປ້ອງຜົນປະໂຫຍດເຊິ່ງກັນ ແລະ ກັນ, ຂໍ້ມູນຕ່າງໆ ທີ່ເປັນຄວາມລັບ ຈະບໍ່ຖືກເປີດເຜີຍໃຫ້ແກ່ບຸກຄົນພາຍນອກ ພາຍໃຕ້ບົດບັນທຶກການຮ່ວມມືສະບັບນີ້. ກໍລະນີ ຝ່າຍໃດໜຶ່ງຕ້ອງການສະໜອງຂໍ້ມູນໃຫ້ພາກສ່ວນອື່ນ ຕ້ອງໄດ້ຮັບການເຫັນດີຈາກອີກຝ່າຍຈຶ່ງສາມາດສະໜອງໃຫ້ໄດ້.

5. **ຂອບເຂດສິດ ແລະ ໜ້າທີ່ ຝ່າຍ ກ:**

5.1 ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບການທາງພາສີ ແລະ ກົດໝາຍທີ່ກ່ຽວຂ້ອງ ໃຫ້ແກ່ **ຝ່າຍ ຂ** ແລະ ສະມາຊິກ ຂອງ **ຝ່າຍ ຂ** ຮັບຊາບຢ່າງກວ້າງຂວາງ;

5.2 ທາບທາມຄຳຄິດຄຳເຫັນ **ຝ່າຍ ຂ** ເວລາມີການປັບປຸງ ຫຼື ສ້າງລະບຽບການ, ກົດໝາຍ, ກົນໄກ, ວິທີການ ແລະ ມາດຕາການທາງດ້ານພາສີ ຕໍ່ກັບການຄຸ້ມຄອງການຂົນສົ່ງສິນຄ້າລະຫວ່າງປະເທດ;

5.3 ໃຫ້ຄຳອະທິບາຍ, ຊີ້ແຈງ ຕໍ່ຄຳຊັກຖາມ ແລະ ຂໍ້ຂ້ອງໃຈ ຂອງ **ຝ່າຍ ຂ** ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທາງພາສີ;

5.4 ມອບສິດໃຫ້ແກ່ **ຝ່າຍ ຂ** ເປັນຜູ້ຄໍ້າປະກັນການນຳເອົາລົດຂົນສົ່ງສິນຄ້າຕ່າງປະເທດເຂົ້າມາ ສປປ ລາວ;

5.5 ສະເໜີໃຫ້ **ຝ່າຍ ຂ** ປະສານຫາ ສະມາຊິກຕົນ ເພື່ອປັບປຸງການດຳເນີນທຸລະກິດ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທາງພາສີ ຢ່າງເຂັ້ມງວດ;

5.6 ສະເໜີຂໍເອົາຂໍ້ມູນກ່ຽວກັບບໍລິສັດຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ຂໍ້ມູນພາຫະນະຂົນສົ່ງລະຫວ່າງປະເທດ ຈາກ **ຝ່າຍ ຂ**;

5.7 ສະໜອງຂໍ້ມູນກ່ຽວກັບ ຜູ້ແຈ້ງພາສີ, ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ ໃຫ້ **ຝ່າຍ ຂ**;

5.8 ເຂົ້າຮ່ວມກອງປະຊຸມປຶກສາຫາລະຫວ່າງສອງຝ່າຍເປັນປົກກະຕິ.

6. **ຂອບເຂດສິດ ແລະ ໜ້າທີ່ ຝ່າຍ ຂ:**

6.1 ຊ່ວຍ ເຜີຍແຜ່ກົດໝາຍ, ລະບຽບການ ແລະ ຂໍ້ມູນຂ່າວສານ ໃຫ້ແກ່ສະມາຊິກຂອງຕົນ ຮັບຊາບ ແລະ ເຄື່ອນໄຫວຢ່າງຖືກຕ້ອງ;

6.2 ປະກອບຄໍາເຫັນ ໃຫ້ແກ່ **ຝ່າຍ ກ** ກ່ຽວກັບຄຸ້ມຄອງວຽກງານພາສີ, ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທາງພາສີ ກ່ຽວກັບການຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ການແຈ້ງພາສີໂດຍ ສັງເຂບລ່ວງໜ້າກ່ອນສິນຄ້າມາຮອດດ່ານ;

6.3 ເປັນຜູ້ຄໍ້າປະກັນໃຫ້ແກ່ການນໍາເອົາພາຫະນະຂົນສົ່ງສິນຄ້າຂອງຕ່າງປະເທດເຂົ້າມາສົ່ງສິນຄ້າຢູ່ ສປປ ລາວ ແລ້ວນໍາອອກຄືນຢ່າງຖືກຕ້ອງ;

6.4 ອອກແບບຟອມການແຈ້ງຂໍ້ມູນການຂົນສົ່ງສິນຄ້າ ໃຫ້ແກ່ບໍລິການຂົນສົ່ງສິນຄ້າລະຫວ່າປະເທດ ສາມາດເຂົ້າເຖິງໄດ້ສະດວກ ແລະ ມີຄວາມຮັບປະກັນ; ໃນກໍລະນີພາຫະນະ ບໍ່ອອກຄືນຕາມກໍານົດ ເວລາ ຫຼື ມີການປ່ຽນຮູບແບບອື່ນ, ມີສິດນໍາໃຊ້ມາດຕະການຕໍ່ຜູ້ຄໍ້າປະກັນ ແລະ ຮັບປະກັນການເລັ່ງ ທວງໃຫ້ສົ່ງອອກຄືນຕາມຂັ້ນຕອນຂອງກົດໝາຍ;

6.5 ສະໜອງຂໍ້ມູນກ່ຽວກັບບໍລິສັດຂົນສົ່ງສິນຄ້າລະຫວ່າງປະເທດ ແລະ ຂໍ້ມູນພາຫະນະຂົນສົ່ງລະຫວ່າງ ປະເທດ ໃຫ້ **ຝ່າຍ ກ**;

6.6 ສະເໜີຂໍເອົາຂໍ້ມູນກ່ຽວກັບຜູ້ແຈ້ງພາສີ, ຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີ ຈາກ **ຝ່າຍ ກ**

6.7 ເຂົ້າຮ່ວມກອງປະຊຸມປຶກສາຫາລະຫວ່າງສອງຝ່າຍເປັນປົກກະຕິ.

7. **ການຈັດປະຊຸມປຶກສາຫາລື**

ທັງສອງຝ່າຍເຫັນດີເປັນເອກະພາບ ຈັດກອງປະຊຸມປຶກສາຫາລືຮ່ວມກັນ ຢ່າງໜ້ອຍປີລະ 2 ຄັ້ງ ໂດຍ ຜັດປ່ຽນກັນເປັນເຈົ້າພາບ. ກໍລະນີ ມີວຽກງານຮີບດ່ວນ ສາມາດຈັດກອງປະຊຸມເປັນວາລະສະເພາະ ໂດຍການ ຕົກລົງເຫັນດີຮ່ວມກັນທັງສອງຝ່າຍ.

8. **ການປັບປຸງ ຫຼື ດັດແກ້ເນື້ອໃນຂອງບົດບັນທຶກ**

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ອາດຈະມີການປັບປຸງ ຫຼື ດັດແກ້ເພີ່ມເຕີມຫາກເຫັນວ່າເນື້ອໃນບໍ່ ສອດຄ່ອງກັບ ການປະຕິບັດຕົວຈິງໃນແຕ່ລະໄລຍະ ຊຶ່ງການດັດແກ້ແມ່ນບົນພື້ນຖານການປຶກສາຫາລື ແລະ ເຫັນດີເປັນເອກະພາບຂອງທັງສອງຝ່າຍ.

9. **ໜ່ວຍງານປະສານ**

ໜ່ວຍງານປະສານຂອງສອງຝ່າຍ ໄດ້ກໍານົດ ດັ່ງນີ້:

**ຝ່າຍ ກ:** ທ່ານ ສົມປະສົງ ອໍາແພງໄພ, ຫົວໜ້າພະແນກນິຕິກໍາ, ກົມພາສີ ເບີໂທລະສັບ 020-22220300;

**ຝ່າຍ ຂ:** ທ່ານ ມະນີວົງ ຜາບມີໄຊ, ຜູ້ປະສານງານຄຸ້ມຄອງການຂົນສົ່ງ, ເບີໂທລະສັບ 020-22234394

**10. ການຈັດຕັ້ງປະຕິບັດ**

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ເຮັດເປັນສອງສະບັບ ໃຫ້ທັງສອງຝ່າຍເກັບສຳເນົາຝ່າຍລະໜຶ່ງສະບັບ ຊຶ່ງທັງສອງຝ່າຍ ຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເປັນເອກະພາບ.

ບົດບັນທຶກຄວາມເຂົ້າໃຈສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເປັນຕົ້ນໄປ.

ທີ່ ນະຄອນຫຼວງວຽງຈັນ, ວັນທີ 01 ທັນວາ 2024

| | |
|---|---|
| **ຫົວໜ້າກົມພາສີ** | **ປະທານສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ** |
| ປອ. ພູເຂົາຄຳ ວັນນະວົງໄຊ | ສາຄອນ ພິລາງາມ |